## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 17 ສິງຫາ 2008 ( 08-17-2008 )

## ຊີວິດທີ່ເຕີບໃຫຍ່:

**ຂໍ້ພຣະຄັມພີໃນບົດຮຽນ:** (ເຮັບເຣີ 5:11-6:12)

**ຄຳຖາມແຫ່ງຊີວິດ:** ເປັນຫຍັງຂ້າພະເຈົ້າຈຶ່ງຈຳເປັນຕ້ອງຈະເຣີນຂຶ້ນທາງຝ່າຍຈິດວິນຍານ?

**ພຣະຄັມພີແຫ່ງຄວາມຈິງ:** ຄຣິສຕຽນຈຳເປັນຕ້ອງສືບຕໍ່ເຕີບໃຫຍ່ຂຶ້ນໃຫ້ເປັນຜູ້ໃຫຍ່ທາງດ້ານຄວາມເຊື່ອ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອໃຫ້ທ່ານຄົ້ນຫາທາງທີ່ດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈຳວັນຂອງທ່ານໂດຍ:

- ແທກລະດັບຂັ້ນຄວາມເຕີບໃຫຍ່ຂອງທ່ານວ່າຢູ່ໃນຂັ້ນໃດແລ້ວ ແລະ
- ພັທນາແຜນການຂອງຕົນເອງໃຫ້ການເປັນຜູ້ເຕີບໃຫຍ່ຝ່າຍຈິດວິນຍານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:**

- ໃຫ້ຊີ້ນຳນັກຮຽນໃຫ້ເອົາໃຈໃສ່ໃນ **ຊີວິດທີ່ດີທີ່ສຸດ** ໃຫ້ນັກຮຽນສຶກສາພຣະທັມເຮັບເຣີເພື່ອຜູ້ທີ່ເຊື່ອທັງຫລາຍຈະໄດ້ຊອກຫາຊ່ອງທາງຮັກສາການຈົດຈໍ່ຢູ່ທີ່ພຣະເຢຊູໃຫ້ຮູ້ຈັກວ່າຊີວິດມີຄຸນຄ່າທີ່ສຸດ.
- ຖາມນັກຮຽນວ່າ: ໃນປີທີ່ຜ່ານມາເຂົາເຈົ້າໄດ້ເຕີບໃຫຍ່ຂຶ້ນຢ່າງໃດ? ເຂົາອາຈແຊເຣື່ອງປະສົບການໃນວຽກງານໃໝ່, ໄດ້ຮຽນການສ້ອມແປງເຮືອນໃໝ່, ປຶ້ມທີ່ເຂົາເຈົ້າໄດ້ອ່ານ, ການໃຊ້ເວລາວ່າງເຫລົ່ານີ້ເປັນຕົ້ນ.

### 1. ຮູ້ວ່າອັນໃດດີ ແລະອັນໃດຊົ່ວ: (ເຮັບເຣີ 5:11-14)

- ໃຫ້ນັກຮຽນອາສາສມັກອ່ານ ເຮັບເຣີ 5:11-14

- ເຮັດໃຫ້ນັກຮຽນມີຄວາມສົນໃຈເຖິງ **ຈິດວິນຍານທີ່ເຕີບໃຫຍ່**
- ຖາມຜູ້ໃດຜູ້ນຶ່ງໃນກຸ່ມທີນຶ່ງໃຫ້ອ່ານຂໍ້ພຣະທັມເຮັບເຣີ 5:11-14 ແລ້ວໃຫ້ໂອກາດກຸ່ມທີ 2-3 ຕອບ.
- ຖາມໃຫ້ນັກຮຽນສເນີທາງທີ່ຄຣິສຕຽນສາມາດຝຶກຝົນໃຫ້ຈິດວິນຍານເຂັ້ມແຂງຂຶ້ນໄດ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>: (ເຮັບເຣີ 5:11-14)

1. ດ້ວຍເຫດໃດຄຣິສຕຽນຈຶ່ງມີຄວາມເຂົ້າໃຈຊ້າ?
2. ເປັນຫຍັງຄຣິສຕຽນຜູ້ທີ່ຕິດຕາມພຣະຄຣິດຈຶ່ງສົມຄວນເປັນຜູ້ທີ່ສອນໄດ້?
3. ນ້ຳນົມ ແລະອາຫານແຂງໝາຍເຖິງຫຍັງ?
4. ຄຣິສຕຽນຜູ້ເຕີບໃຫຍ່ໄດ້ຮຽນສັງເກດຈາກຄວາມຊົ່ວຮ້າຍແນວໃດ?

## 2. <u>ຈົ່ງເກີດຜົນ ແລະຮັບພຣະພອນຈາກພຣະເຈົ້າ:</u> (ເຮັບເຣີ 6:1-8)

- ຂໍໃຫ້ນັກຮຽນອາສາສມັກອ່ານ ເຮັບເຣີ 6:1-3.
- ເອົາຕົ້ນໄມ້ທີ່ມີສີຂຽວງົດງາມມາສະແດງ ເພື່ອເປັນການດຶງດູດຈຸດສົນໃຈນັກຮຽນ. ຈົ່ງຖາມເຂົາເຈົ້າວ່າ: ໃນເມື່ອເບິ່ງຕົ້ນໄມ້ຕົ້ນນີ້ແລ້ວ ຮູ້ໄດ້ຢ່າງໃດວ່າຕົ້ນໄມ້ນີ້ມີສຸຂພາບເຂັ້ມແຂງສົມບູນດີ. ລັກສະນະຄວາມສົມບູນຂອງຕົ້ນໄມ້ມາປຽບທຽບໃສ່ກັບຄວາມສົມບູນຂອງຄຣິສສຕຽນເບິ່ງວ່າເປັນແນວໃດ. ຖ້າຫາກເຫັນວ່າຕົ້ນໄມ້ບໍ່ສົມບູນ ເຂົາເຈົ້າຈະຊ່ອຍຕົ້ນໄມ້ໃຫ້ສົມບູນໄດ້ຢ່າງໃດ ແລະເຂົາເຈົ້າຈະເຮັດແນວໃດທີ່ເຫັນວ່າຕົ້ນໄມ້ນັ້ນຈະບໍ່ມີຊີວິດຢູ່ໄດ້ ( ບໍ່ເຫັນຮ່ອງຮອຍຈະຄົນມີຊີວິດຢູ່ໄດ້)
- ໃຫ້ນັກຮຽນຊ່ອຍທ່ານບອກ 6 ພື້ນຖານຄວາມເຊື່ອຂອງຄົນຢິວ ແລະ ຄຣິສຕຽນທີ່ຜູ້ຂຽນພຣະທັມເຮັບເຣີໄດ້ຍົກຂຶ້ນມາໃນຂໍ້ທີ 1-2 ຂຽນລົງໃນກະດານ.
- ຊີ້ແຈງຕາມທີ່ທ່ານຂຽນໄວ້ກະດານນັ້ນ, ແລ້ວຖາມວ່າ ຖ້າສິ່ງເຫລົ່ານີ້ຫາກເປັນພື້ນຖານຂັ້ນຕົ້ນ, ແມ່ນຫຍັງທີ່ຜູ້ທີ່ເຊື່ອຄວນຈະກ້າວໄປສູ່ການເຕີບໃຫຍ່?
- ທ່ານຈະສາມາດຊີມຣົດຊາດຂອງພຣະຄຳໄດ້ຢ່າງໃດ? (ຈະຟັງ ຫລືຈະປະຕິເສດ)
- ໃນເມື່ອຄົນໄດ້ຟັງໄດ້ຍິນພຣະຄຳຂອງພຣະເຈົ້າ ແລະຕ້ອນຮັບເອົາແລ້ວຈະມີຫຍັງເກີດຂຶ້ນ? (ເຂົາກໍກາຍມາເປັນຄຣິສຕຽນ ແລະເລີ້ມຈະເຣີນເຕີບໃຫຍ່ຂຶ້ນ)
- ກັບໄປຫາຕົ້ນໄມ້ທີ່ຂຽວສົດອີກເທື່ອນຶ່ງ, ທີ່ບົ່ງບອກວ່າມັນບໍ່ໄດ້ໃຫຍ່ຂຶ້ນຢ່າງອັຕໂນມັດ, ແລະຄຣິສຕຽນພວກເຮົາກໍເຊັ່ນດຽວກັນ. ພວກເຮົາຕ້ອງຫົດນ້ຳຕົ້ນໄມ້ນັ້ນ, ແນ່ນອນພວກເຮົາຕ້ອງໃຫ້ມັນຖືກແດດ ແລະໃສ່ຝຸ່ນ (ປຸ໋ຍ) ຢ່າງດີ ແລະເອົາໄວ້ບ່ອນທີ່ມັນຈະສາມາດຈະເຣີນເຕີບໃຫຍີຂື້ນໄດ້, ແຕ່ວ່າພຣະເຈົ້າເທົ່ານັ້ນທີ່ເຮັດໃຫ້ຕົ້ນໄມ້ໃຫຍ່ຂື້ນມາ, ການຈະເຣີນເຕີບໃຫຍ່ຂອງຝ່າຍຈິດວິນຍານກໍເຊັ່ນດຽວກັນ. ພວກເຮົາຕ້ອງຕິດສນິດຢູ່ກັບພຣະເຈົ້າເພື່ອໃຫ້ຈິດວິນຍານຂອງພວກເຮົາຈະເຣີນເຕີບໃຫຍ່ຂຶ້ນ; ຖ້າປາສະຈາກພຣະເຈົ້ານຳພາ ແລະຊ່ອຍເຫລືອ ແລ້ວພວກເຮົາກໍບໍ່ອາດສາມາດເຮັດສິ່ງໃດໄດ້, ພຣະອົງຊົງມີພຣະປະສົງຢາກຊ່ອຍພວກເຮົາເຕີບໃີໃຫຍ່ຂຶ້ນ ຖ້າຫາກພວກເຮົາຕ້ອງການການເຕີບໃຫຍ່.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ::</u> (ເຮັບເຣີ 6:1-8)

1. ຜູ້ທີ່ຂຽນພຣະທັມເຮັບເຣີເວົ້າເຖິງຄຣິສຕຽນ ຫລືເວົ້າເຖິງບັນດາຜູ້ທີ່ບໍ່ເຊື່ອ?
2. ດ້ວຍເຫດໃດຜູ້ທີ່ຂຽນຈຶ່ງເວົ້າວ່າຄວາມເຊື່ອເປັນພື້ນຖານຂອງການໄວ້ວາງໃຈ?

3. ຈາກການພິຈາຣະນາຂອງທ່ານນັ້ນແມ່ນຫຍັງທີ່ເປັນພື້ນຖານຂອງຄວາມເຊື່ອສຳລັບຄຣິສຕຽນໃນສມັຍນີ້?
4. ທ່ານຈະສັນນິຖານທັມມະຊາດຂອງບັນດາຜູ້ທີ່ເຊື່ອດ້ວຍວິທີໃດ?
5. ບັນດາຜູ້ທີ່ເຊື່ອຈະແນ່ໃຈວ່າເຂົາເຈົ້າຈະໄດ້ຮັບການອວຍພຣະພອນຈາກພຣະເຈົ້າແທນການລົງໂທດແນວໃດ?

## 3. <u>ສະແດງຄວາມພາກພຽນ:</u> (ເຮັບເຣີ 6:9-12)

- ຂໍໃຫ້ນັກຮຽນອາສາສມັກອ່ານ ເຮັບເຣີ 6:9-12
- ໃນຂນະທີ່ຜູ້ນີ່ງອ່ານຢູ່ ໃຫ້ຄົນອື່ນໆຟັງໃນທາງທີ່ຜູ້ຂຽນໄດ້ຂຽນເຖິງບັນດາຜູ້ທີ່ເຊື່ອທັງຫລາຍໃນການນຳພາຂອງເຂົາເຈົ້າເພື່ອໃຫ້ເຫັນເຖິງຈຸດຄວາມເຊື່ອ ຄວາມໄວ້ວາງໃຈ ແລະຄວາມຈະເຣີນເຕີບໃຫຍ່ຂື້ນໄປເລື້ອຍໆ.
- ຄວາມຮັກຂອງພໍ່ແມ່ບາງເທື່ອກໍຕ້ອງການຝຶກຝົນຫລາຍກວ່າການເຂົ້າຫາຊ່ອຍເຫລືອແບບທັມມະຊາດ (ຕາມນິຕາມເກີດ). ຄວາມຮັກ ແລະການຕິສອນທັງສອງນີ້ຕ້ອງພົວພັນກັນ ສິ່ງທີ່ຈຳເປັນນັ້ນກໍຄືການເຕືອນສະຕິ ການໃຫ້ກຳລັງໃຈຊ່ອຍໃຫ້ຈະເຣີນຂື້ນໄດ້ດີ.
- ບັນລະຍາຍ: ຜູ້ທີ່ຂຽນພຣະທັມເຮັບເຣີໄດ້ສເນີໃຫ້ຜູ້ທີ່ເຊື່ອທັງຫລາຍ ບໍ່ພຽງແຕ່ຮຽນແບບຂອງພຣະຄຣິດແຕ່ຕ້ອງເປັນຄຣິສຕຽນທີ່ເຕີບໃຫຍ່ດ້ວຍ. ຜູ້ທີ່ເຊື່ອຈະສະແດງໃຫ້ເຫັນຄວາມເຕີບໃຫຍ່ໃນການເປັນຄຣິສຕຽນໄດ້ແນວໃດ? ເຂົາເຈົ້າຄວນຈະສັງເກດເຖິງການສຳຜັດທີ່ບໍ່ມີຕົວຕົນໃນຊີວິດຂອງເຂົາເຈົ້າໄດ້ຢ່າງໃດ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 6:9-12)
1. ທ່ານຄິດວ່າຜູ້ຂຽນພຣະທັມເຮັບເຣີໄດ້ແປອອກມາຈາກເຂັ້ມງວດໃນການເຕືອນເພື່ອເປັນການໜູນຈິດໃຈແນວໃດ?
2. ພຣະເຈົ້າໄດ້ສຳແດງເຖິງຄວາມເປັນພຣະເຈົ້າຂອງພຣະອົງແນວໃດ?
3. ພວກເຮົາຈະສຳແດງວ່າພວກເຮົາຮັກພຣະນາມຂອງພຣະເຈົ້າແນວໃດ?
4. ບັນດາຜູ້ທີ່ເຊື່ອຄວນຈະສະແດງຄວາມຂຍັນຂັນແຂງຢ່າງໃດ?
5. ບັນດາຜູ້ທີ່ເຊື່ອຄວນຈະຮຽນແບບຢ່າງຂອງໃຜ? ແມ່ນຫຍັງທີ່ເປັນພຶດຕິກັມທີ່ສົມຄວນເປັນແບບຢ່າງໄດ້?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ການງານຂອງຄຣິສຕຽນຕ້ອງຢູ່ທີ່ການຈະເຣີນເຕີບໃຫຍ່ຂື້ນທາງຝ່າຍຈິດວິນຍານ.
- ການຈະເຣີນເຕີບໃຫຍ່ເຕັມທີ່ຂອງຄຣິສຕຽນຈະບໍ່ເກີດຂື້ນໂດຍອັຕໂນມັດ; ຕ້ອງອາສັຍທັງຄວາມພຍາຍາມຂອງພວກເຮົາ ແລະການຊ່ອຍເຫລືອຂອງພຣະເຈົ້າ.
- ຄຣິສຕຽນຕ້ອງການຮຽນແບບຂອງຜູ້ທີ່ຈະເຣີນເຕີບໃຫຍ່ທາງຝ່າຍຈິດວິນຍານ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH